ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 088 /ທຄຕລ.2015
ນະຄອນຫຼວງວຽງຈັນ, ວັນທີ: 11/11/2015

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່

- ອີງຕາມການສະເໜີຂອງ ທຄຕລ ສຳນັກງານໃຫຍ່ ສະບັບເລກທີ 054/ທຄຕລ.2015 ລົງວັນທີ **21/09/2015,**
- ອີງຕາມແຈ້ງຕອບຂອງກົມຈັດຕັ້ງ ແລະ ພະນັກງານ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 276/ກຈພ ລົງວັນທີ **26/10/2015,**
- ອີງຕາມການເຫັນດີເປັນເອກະພາບຂອງສະພາບໍລິຫານ ທຄຕລ ຄັ້ງວັນທີ **29/10/2015**, ວັນທີ **02/11/2015** ແລະ ວັນທີ **03/11/2015**.

**ຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຕົກລົງ :**

**ມາດຕາ 1:** ເຫັນດີແຕ່ງຕັ້ງ **ທ່ານ ຄຳຊ່ຽນ ມິ່ງບຸບຜາ** ຫົວໜ້າ ທຄຕລ ສາຂາຫຼວງພະບາງ ໃຫ້ເປັນ ຮອງຜູ້ອຳນວຍການໃຫຍ່ ທຄຕລ, ນັບແຕ່ວັນທີ **23/11/2015** ເປັນຕົ້ນໄປ.

**ມາດຕາ 2:** ກ່ອນຈະໄປຮັບໜ້າທີ່ວຽກງານໃໝ່ ໃຫ້ມອບວຽກທີ່ຕົນຮັບຜິດຊອບປະຈຸບັນ ຄືນໃຫ້ຄະນະສາຂາທີ່ສັງກັດຢ່າງເປັນລາຍລັກອັກສອນ.

**ມາດຕາ 3:** ມອບໃຫ້ ຄະນະອຳນວຍການ, ພະແນກຈັດຕັ້ງ-ພະນັກງານ, ພະແນກຫ້ອງການບໍລິຫານ-ການເງິນ, ທຸກພາກສ່ວນທີ່ກ່ຽວຂ້ອງ, ທ່ານທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດຕາມໜ້າທີ່ຂອງໃຜລາວ.

**ມາດຕາ 4:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຮັກສາການຜູ້ອຳນວຍການໃຫຍ່**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ພູຊົງ ຈັນທະຈັກ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 059 /ທຄຕລ.2015
ນະຄອນຫຼວງວຽງຈັນ, ວັນທີ: 11/11/2015

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຮອງຜູ້ອຳນວຍການໃຫຍ່

- ອີງຕາມການສະເໜີຂອງ ທຄຕລ ສຳນັກງານໃຫຍ່ ສະບັບເລກທີ 054/ທຄຕລ.2015 ລົງວັນທີ **21/09/2015,**
- ອີງຕາມແຈ້ງຕອບຂອງກົມຈັດຕັ້ງ ແລະ ພະນັກງານ ທະນາຄານແຫ່ງ ສປປ ລາວ ສະບັບເລກທີ 276/ກຈພ ລົງວັນທີ **26/10/2015,**
- ອີງຕາມການເຫັນດີເປັນເອກະພາບຂອງສະພາບໍລິຫານ ທຄຕລ ຄັ້ງວັນທີ **29/10/2015**, ວັນທີ **02/11/2015** ແລະ ວັນທີ **03/11/2015.**

**ຜູ້ອຳນວຍການໃຫຍ່ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຕົກລົງ :**

**ມາດຕາ 1:** ເຫັນດີແຕ່ງຕັ້ງ **ທ່ານ ສຸພັກ ຖິ່ນໄຊພອນ** ຫົວໜ້າ ທຄຕລ ສາຂານະຄອນຫຼວງວຽງຈັນ ໃຫ້ເປັນຮອງຜູ້ອຳນວຍການໃຫຍ່ ທຄຕລ, ນັບແຕ່ວັນທີ **23/11/2015** ເປັນຕົ້ນໄປ.

**ມາດຕາ 2:** ກ່ອນຈະໄປຮັບໜ້າທີ່ວຽກງານໃໝ່ ໃຫ້ມອບວຽກທີ່ຕົນຮັບຜິດຊອບປະຈຸບັນ ຄືນໃຫ້ຄະນະສາຂາທີ່ສັງກັດຢ່າງເປັນລາຍລັກອັກສອນ.

**ມາດຕາ 3:** ມອບໃຫ້ ຄະນະອຳນວຍການ, ພະແນກຈັດຕັ້ງ-ພະນັກງານ, ພະແນກຫ້ອງການບໍລິຫານ-ການເງິນ, ທຸກພາກສ່ວນທີ່ກ່ຽວຂ້ອງ, ທ່ານທີ່ຖືກແຕ່ງຕັ້ງຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດຕາມໜ້າທີ່ຂອງໃຜລາວ.

**ມາດຕາ 4:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຮັກສາການຜູ້ອຳນວຍການໃຫຍ່**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ແຫ່ງ ຮັບຜິດຊອບ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC ນະຄອນ ຫຼວງ ວຽງຈັນ

ພູຂົງ ຈັນທະຈັກ

ເລກທີ 01, ຖະໜົນ: ປາງຄຳ ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ: 2925, ໂທລະສັບ: (856-21) 213200-1, 2213203, 222747, 223243, 223244
ແຟັກ: (856-21)213202, 223012, 222495. Website: http//www.bcel. com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

@@@@@@@@@@@@@@@@@@



ຊີວະປະຫວັດຫຍໍ້ຂອງພະນັກງານ

I. ສະພາບທົ່ວໄປ:

ຊື່ ແລະ ນາມສະກຸນ: ທ່ານ ຄຳຊຽນ ມີງບຸບຜາ ວັນ, ເດືອນ, ປີ ເກີດ: 03/08/1962

ເຊື້ອຊາດ: ລາວ, ສາດສະໜາ: ພຸດ

ບ້ານເກີດ: ນາໂຄ້ງ ເມືອງ: ຮຸນ ແຂວງ: ອຸດົມໄຊ

ບ່ອນຢູ່ປະຈຸບັນ: ວັດທາດ ເມືອງ: ຫຼວງພະບາງ ແຂວງ: ຫຼວງພະບາງ

ວັນ, ເດືອນ, ປີ ເຂົ້າສັງກັດລັດ: 01/10/1979 ປີການ: 36 ປີ

ລະດັບວັດທະນະທຳ: ມ.6

ລະດັບທິດສະດີ: ບຳລຸງ

ລະດັບວິຊາສະເພາະ: ປະລິນຍາຕີດ້ານການເງິນ ຢູ່ແຂວງຫຼວງພະບາງ

ພາສາຕ່າງປະເທດທີ່ຮູ້ ແລະ ເຂົ້າໃຈ: ຫວຽດນາມ ລະດັບ: ພໍໃຊ້

II. ປະຫວັດການສຶກສາ:

1968- 1976 ເປັນນັກຮຽນປະຖົມ ແຂວງຫຼວງພະບາງ

1976 - 1979 ເປັນນັກຮຽນມັດທະຍົມ ແລະ ອຸດົມ ແຂວງອຸດົມໄຊ

1980 - 1982 ເປັນນັກສຶກສາການທະນາຄານ ຢູ່ ສສ. ຫວຽດນາມ

1982 - 1989 ເປັນນັກສຶກສາຢູ່ໂຮງຮຽນທ່າງ່ອນ

III. ສະພາບການເຄື່ອນໄຫວວຽກງານນັບແຕ່ມື້ເຂົ້າສັງກັດລັດ ຈົນເຖິງປັດຈຸບັນ:

1979 ເປັນພະນັກງານ ທະນາຄານແຫ່ງ ສປປ ລາວ

1989 - 1991 ເປັນພະນັກງານ ທະນາຄານແຫ່ງ ສປປ ລາວ

1991 - 2000 ເປັນພະນັກງານ ທະນາຄານສົ່ງເສີມກະສິກຳ

2000 - 2004 ເປັນຮອງຫົວໜ້າ ທກຄລ ສາຂາຫຼວງພະບາງ

2004 - 2005 ເປັນຫົວໜ້າ ທຄຕລ ສາຂາຫຼວງນໍ້າທາ

2005 – 11/2015 ເປັນຫົວໜ້າ ທຄຕລ ສາຂາຫຼວງພະບາງ.

IV. ການຈັດຕັ້ງຕີລາຄາການເຄື່ອນໄຫວວຽກງານໄລຍະຜ່ານມາ:

ດ້ານຕັ້ງໜ້າ: ເປັນຄົນອຸ່ນອຽນທຸ່ນທ່ຽງ, ເປັນພະນັກງານເກົ່າແກ່ອາວຸໂສ, ມີຜົນງານປະກອບສ່ວນວຽກງານຢູ່ທະນາຄານມາຫຼາຍປີ, ມີຄວາມສາມັກຄີກວ້າງຂວາງ, ຮູ້ປະສານງານກັບຂັ້ນລຸ່ມໄດ້ດີ ແລະ ສາມາດເຮັດສໍາເລັດໜ້າທີ່ໆການຈັດຕັ້ງມອບໝາຍໃຫ້ໄດ້ເປັນຢ່າງດີ.

ຂໍ້ຄົງຄ້າງ: ການໝູນໃຊ້ຄວາມຮູ້ທາງດ້ານທິດສະດີການເມືອງຍັງບໍ່ທັນກວ້າງຂວາງ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

@@@@@@@@@@@@@@@@@@@



ຊີວະປະຫວັດຫຍໍ້ຂອງພະນັກງານ

I. ສະພາບທົ່ວໄປ:

ຊື່ ແລະ ນາມສະກຸນ: ທ່ານ ສຸພັກ ຖິ່ນໄຊພອນ ວັນ, ເດືອນ, ປີ ເກີດ: 20/08/1968

ເຊື້ອຊາດ: ລາວ, ສາດສະໜາ: ພຸດ

ບ້ານເກີດ: ຄັງຍາວ, ເມືອງ: ແປກ, ແຂວງ: ຊຽງຂວາງ

ບ່ອນຢູ່ປະຈຸບັນ: ບ້ານໂພນສະຫວັນ, ເມືອງ ແປກ, ແຂວງຊຽງຂວາງ

ວັນ, ເດືອນ, ປີ ເຂົ້າສັງກັດລັດ: 01/06/1996 ປີການ: 19 ປີ

ລະດັບວັດທະນະທຳ: ມ.6

ລະດັບທິດສະດີ: ຊັ້ນສູງ

ລະດັບວິຊາສະເພາະ: ປະລິນຍາໂທ ດ້ານການເງິນ-ການທະນາຄານ

ພາສາຕ່າງປະເທດທີ່ຮູ້ ແລະ ເຂົ້າໃຈ: ຫວຽດນາມ ລະດັບ: ດີ.

II. ປະຫວັດການສຶກສາ

1976 - 1981 ເປັນນັກຮຽນປະຖົມຢູ່ໂຮງຮຽນໄຊຊະນະ ແຂວງຊຽງຂວາງ

1981 - 1984 ເປັນນັກຮຽນມັດທະຍົມຕອນຕົ້ນ ໂຮງຮຽນໄຊຊະນະ ແຂວງຊຽງຂວາງ

1985 - 1986 ເປັນນັກຮຽນອຸດົມ ໂພນສະຫວັນ ແຂວງຊຽງຂວາງ

1990 - 1995 ເປັນນັກສຶກສາຢູ່ ສ.ສ ຫວຽດນາມ

III. ສະພາບການເຄື່ອນໄຫວວຽກງານນັບແຕ່ມື້ເຂົ້າສັງກັດລັດ ຈົນເຖິງປັດຈຸບັນ:

1996 ເປັນພະນັກງານ ຢູ່ພະແນກຄຸ້ມຄອງສິນເຊື່ອ ສຳນັກງານໃຫຍ່

05/2000 ເປັນຫົວໜ້າຂະແໜງສິນເຊື່ອ ທຄຕລ ສາຂາອຸດົມໄຊ

01/2003 - 04/2008 ເປັນວ່າການຫົວໜ້າ ທະນາຄານການຄ້າຕ່າງປະເທດລາວ ສາຂາອຸດົມໄຊ

**05/2008 - 05/2014 ເປັນຫົວໜ້າ ທຄຕລ ສາຂາຊຽງຂວາງ**

**05/2014 – 11/2015 ເປັນຫົວໜ້າ ທຄຕລ ສາຂານະຄອນຫຼວງວຽງຈັນ**

IV. ການຈັດຕັ້ງຕີລາຄາການເຄື່ອນໄຫວວຽກງານໄລຍະຜ່ານມາ:

ດ້ານຕັ້ງໜ້າ: ເປັນພະນັກງານລຸ້ນບຸກເບີກ ສາຂາອຸດົມໄຊ ແລະ ສາຂາຊຽງຂວາງ, ເປັນຄົນອຸ່ນອຽນ ທຸ່ນທ່ຽງ ແລະ ມີຄວາມຊື່ສັດຕໍ່ໜ້າທີ່ວຽກງານ, ມີທັດສະນະຫຼັກໝັ້ນດີ ມີຄວາມສາມາດໃນການບໍລິຫານ ວຽກງານໄດ້ດີ, ມີຄວາມສາມັກຄີກວ້າງຂວາງ, ຮູ້ພົວພັນຂັ້ນເທິງ ແລະ ປະສານງານກັບຂັ້ນລຸ່ມໄດ້ດີ ສາມາດ ເຮັດສຳເລັດໜ້າທີ່ໆການຈັດຕັ້ງມອບໝາຍໃຫ້ໄດ້ເປັນຢ່າງດີ ແລະ ສາມາດສ້າງເປັນພະນັກງານສືບທອດໄດ້.

ຂໍ້ຄົງຄ້າງ: ຍັງເປັນຄົນຈິ່ງຈຽມບໍ່ກ້າຕຳນິໝູ່ຄູ່ ແລະ ບາງຄັ້ງກໍ່ເປັນຄົນໃຈອ່ອນ.